ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງວຽງຈັນ

ເລກທີ 2145 /ຈຂ.ວຈ
ວັນທີ 08/ຕຸລາ/2019

# ຂໍ້ຕົກລົງ

## ວ່າດ້ວຍ ການຈັດສັນ, ຄຸ້ມຄອງ ແລະ ພັດທະນາເທດສະບານ ແຂວງວຽງຈັນ

- ອີງຕາມ ກົດໝາຍວ່າດ້ວຍ: ການປົກຄອງທ້ອງຖິ່ນສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ກົດໝາຍວ່າດ້ວຍ: ຜັງເມືອງ ສະບັບເລກທີ 99/ສພຊ, ລົງວັນທີ 03 ເມສາ 1999.
- ອີງຕາມ ຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 10751/ຍທຂ, ລົງວັນທີ 28 ກໍລະກົດ 2010 ວ່າດ້ວຍ: ການຮັບຮອງເອົາແຜນຜັງເມືອງວຽງຄຳເທດສະບານ ແຂວງວຽງຈັນ.
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງວຽງຈັນ ສະບັບເລກທີ 1929/ຈຂ.ວຈ, ລົງວັນທີ 4 ທັນວາ 2012 ວ່າດ້ວຍ: ການຮັບຮອງເອົາການອອກແບບຈັດສັນແຜນຜັງລະອຽດເຂດໃຈກາງເທດສະບານແຂວງວຽງຈັນ.

### ເຈົ້າແຂວງຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດສັນ, ການຄຸ້ມຄອງ, ການພັດທະນາ, ການຕິດຕາມກວດກາເທດສະບານແຂວງ ເພື່ອເຮັດໃຫ້ເຂດດັ່ງກ່າວເປັນເຂດພັດທະນາທີ່ມີຄຸນນະພາບ, ມີຄຸນປະໂຫຍດສູງສຸດ, ມີຄວາມຍືນຍົງ, ສອດຄ່ອງກັບພູມສັນຖານ, ການອານຸລັກຮັກສາທຳມະຊາດ, ແມ່ນ້ຳແລະ ສິ່ງແວດລ້ອມທົ່ວໄປ ທີ່ສາມາດຮອງຮັບການປ່ຽນແປງສະພາບດິນຟ້າອາກາດ ໃນປັດຈຸ ບັນ ແລະ ອານາຄົດ.

**ມາດຕາ 2 ການຈັດສັນ, ຄຸ້ມຄອງ ແລະ ພັດທະນາເທດສະບານ ແຂວງວຽງຈັນ.**

ແມ່ນ ການຈັດແບ່ງທີ່ດິນໃນຂອບເຂດເທດສະບານແຂວງວຽງຈັນ ໃຫ້ແກ່ການຈັດຕັ້ງ, ບຸກຄົນ ແລະ ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ສອດຄ່ອງຕາມແຜນຜັງທີ່ກຳນົດໄວ້ ເພື່ອເຮັດໃຫ້ຂອບເຂດດັ່ງກ່າວໄດ້ຮັບການພັດທະນາດີຂຶ້ນ ໂດຍມີການຄຸ້ມຄອງ ແລະ ຄວບຄຸມການດຳເນີນກິດຈະການ ແລະ ການກໍ່ສ້າງ ຈາກພາກສ່ວນກ່ຽວຂ້ອງ ແລະ ອີງການປົກຄອງ ແຂວງວຽງຈັນ.

**ມາດຕາ 3 ອະທິບາຍຄຳສັບ.**

ຄຳສັບຕ່າງໆ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງຕໍ່ໄປນີ້:

1. ການຈັດສັນ ແມ່ນໝາຍເຖິງການຈັດສັນແບ່ງປັນທີ່ດິນ ໃຫ້ອົງການຈັດຕັ້ງ, ນິຕິບຸກຄົນ, ບຸກຄົນ ແລະ ທຸລະກິດທັງພາຍໃນ ແລະ ຕ່າງປະເທດ ເພື່ອດຳເນີນທຸລະກິດ-ກິດຈະການຕ່າງໆ ຢູ່ພາຍໃນຂອບເຂດເທດສະບານແຂວງ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມແຜນຜັງເທດສະບານແຂວງ ທີ່ໄດ້ກຳນົດໄວ້ແລ້ວ.

2. ການຄຸ້ມຄອງແມ່ນໝາຍເຖິງ ການອໍານວຍ-ຄວບຄຸມການດໍາເນີນກິດຈະການ, ພັດທະນາ ຫລື ການກໍ່ສ້າງກິດຈະການຕ່າງໆ ຢູ່ໃນພື້ນທີ່ຂອບເຂດເທດສະບານແຂວງ ໃຫ້ຖືກຕ້ອງສອດຄ່ອງ ຕາມມາດຕະຖານເຕັກນິກ ຂອງຜັງເມືອງ.
3. ການພັດທະນາ ແມ່ນໝາຍເຖິງ ການປັບປຸງ-ປ່ຽນແປງ ແລະ ກໍ່ສ້າງກິດຈະການຕ່າງໆ ໃນຂອບເຂດເທດສະບານແຂວງໃຫ້ດີຂຶ້ນ ແລະຖືກຕ້ອງສອດຄ່ອງ ຕາມແຜນຜັງເທດສະບານ ແລະ ລະບຽບກົດໝາຍທີ່ກໍານົດໄວ້.
4. ໃຈກາງເທດສະບານແຂວງແມ່ນນອນຢູ່ໃນເນື້ອທີ່ 1700ຮຕ ເລີ່ມແຕ່ບ້ານໂພນໝີຮອດບ້ານປາກກະຍຸງ.
5. ທາງສາຍເອກ (ສາຍA): ແມ່ນເສັ້ນທາງທີ່ຮັບຮອງເອົາການສັນຈອນທັງໝົດ ຂອງຕົວເມືອງລວມທັງການສັນ ຈອນເຂົ້າ-ອອກຕົວເມືອງ, ທີ່ມີ ຄວາມກວ້າງທັງໝົດ 37 ແມັດ ເລີ່ມແຕ່ທາງເລກ 10 ບ້ານໂພນໝີ (ຄຸ້ມໂພນໝີໃຕ້) ມາຫາເສັ້ນທາງ 4507 ຢູ່ອີງວຽນບ້ານເມືອງເກົ່າ.
6. ທາງສາຍຫຼັກ (ສາຍB):ແມ່ນເສັ້ນທາງຮັບເອົາການສັນຈອນຈາກທາງສາຍເອກ ແລະ ເຂດຕ່າງໆຂອງຕົວເມືອງ, ທີ່ມີຄວາມກວ້າງທັງໝົດ 28 ແມັດ.
7. ທາງສາຍເຊື່ອມ (ສາຍC):ແມ່ນເສັ້ນທາງທີ່ມີໜ້າທີ່ກະຈາຍການຈາລະຈອນຈາກທາງສາຍເອກ, ທາງສາຍຫຼັກ ແລະ ທາງສາຍແຈກ ທີ່ມີຄວາມກວ້າງ 18 ແມັດ.
8. ທາງສາຍແຈກ (ສາຍD): ແມ່ນເສັ້ນທາງທີ່ມີໜ້າທີ່ກະຈາຍການຈາລະຈອນລະຫວ່າງຄຸ້ມຕໍ່ຄຸ້ມອອກສູ່ລະບົບເສັ້ນທາງໃນຕົວເມືອງ ແລະ ເປັນສິ່ງອໍານວຍຄວາມສະດວກ ໃຫ້ແກ່ການຂະຫຍາຍໂຄງລ່າງພື້ນຖານເຊັ່ນ: ຕາໜ່າງໄຟຟ້າ, ໂທລະຄົມ, ນໍ້າປະປາ ແລະ ອື່ນໆ.
9. ທາງເອກະລັກ: ແມ່ນເສັ້ນທາງເຊື່ອມຕໍ່ ລະຫວ່າງ ສໍານັກງານອົງການປົກຄອງແຂວງ ເຂົ້າສູ່ສະໜາມກິລາຂອງແຂວງ ທີ່ມີຄວາມກວ້າງ 42 ແມັດ.
10. ເສັ້ນແຖວການປຸກສ້າງ: ໝາຍເຖິງເສັ້ນທາງກໍານົດໄວ້ ເພື່ອວາງທີ່ຕັ້ງດ້ານໜ້າຊັ້ນລຸ່ມຂອງອາຄານທີ່ຕິດກັບໜ້າດິນເຊິ່ງຂະໜານໄປຕາມລວງຍາວຂອງເຂດສະຫງວນເສັ້ນທາງທີ່ໄດ້ກໍານົດໄວ້ໃນແຜນຜັງຈັດສັນລະອຽດ.
11. ເຂດສາທາລະນະ-ເຂດຂຽວ:ໝາຍເຖິງເຂດທີ່ຖືກຈັດສັນໃຫ້ເປັນສະຖານທີ່ພັກຜ່ອນໃຫ້ແກ່ສັງຄົມ, ປະຊາຊົນຕາມຊຸມຊົນໂດຍລັດເປັນເຈົ້າຂອງ ແລະ ເປັນຜູ້ເບິ່ງແຍງປົກປັກຮັກສາ.
12. ເຂດທີ່ຢູ່ອາໃສ:ໝາຍເຖິງເຂດທີ່ຖືກຈັດສັນໃຫ້ແກ່ການປຸກສ້າງທີ່ພັກອາໄສເປັນເຂດເຮືອນດ່ຽວ, ເຮືອນຄູ່ ແລະ ເຮືອນຫ້ອງແຖວ.
13. ເຂດສໍານັກງານອົງການ:ໝາຍເຖິງເຂດຮັບໃຊ້ສະເພາະວຽກງານບໍລິຫານການປົກຄອງ.
14. ເຂດການຄ້າ-ການບໍລິການ: ໝາຍເຖິງ ເຂດທີ່ມີສິ່ງອໍານວຍຄວາມສະດວກທາງດ້ານ ທຸລະກິດ-ການຄ້າ ທີ່ມີການຊື້-ຂາຍ, ແລກປ່ຽນສິນຄ້າ.
15. ເຂດປະສົມ: ໝາຍເຖິງເຂດທີ່ຢູ່ອາໄສກວມເອົາເຮືອນຕໍ່າ, ເຮືອນສູງ, ເຮືອນຫ້ອງແຖວ, ຮ້ານຄ້າ ແລະ ການບໍລິການອື່ນໆ.

**ມາດຕາ 4 ຫຼັກການຈັດຕັ້ງປະຕິບັດ.**

- ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຢາກເຂົ້າມາພັດທະນາໃນພື້ນທີ່ຂອບເຂດເທດສະບານແຂວງ ຕ້ອງໄດ້ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.
- ການຄຸ້ມຄອງ ແລະ ພັດທະນາເທດສະບານແຂວງ ໃຫ້ປະຕິບັດຕາມຫຼັກການປະຕູດຽວ ພາຍໃຕ້ການຊີ້ນໍາ-ນໍາພາ ຂອງອົງການປົກຄອງແຂວງວຽງຈັນ.

**ມາດຕາ 5 ຂອບເຂດການນໍາໃຊ້ຂໍ້ຕົກລົງ.**

ຂໍ້ຕົກລົງສະບັບນີ້ນໍາໃຊ້ສໍາລັບການຈັດຕັ້ງຂອງພັກ, ລັດ, ການຈັດຕັ້ງມະຫາຊົນ, ສັງຄົມ, ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການຈັດສັນ,ຄຸ້ມຄອງ ແລະ ພັດທະນາເທດສະບານແຂວງວຽງຈັນ.

## ໝວດທີ 2
## ທີ່ຕັ້ງ, ຂອບເຂດ ແລະ ອົງປະກອບ ເທດສະບານແຂວງ

**ມາດຕາ 6 ທີ່ຕັ້ງເທດສະບານແຂວງ.**

ເທດສະບານແຂວງວຽງຈັນຕັ້ງຢູ່ເຂດໃຈກາງຂອງແຂວງວຽງຈັນ, ເປັນເຂດທີ່ອ້ອມຮອບໄປດ້ວຍພູຜາປ່າໄມ້ ແລະ ເປັນເຂດໃຈກາງຂອງເສດຖະກິດ-ສັງຄົມ, ວັດທະນະທຳ ແລະ ການບໍລິການ.ຄືວເມືອງຕັ້ງຢູ່ລຽບແຄມແມ່ນ້ຳງື່ມ, ມີເສັ້ນທາງທີ່ສຳຄັນຄື: ທາງຫລວງແຫ່ງຊາດເລກ 10 ເຊື່ອມຕໍ່ຫາເສັ້ນທາງເລກທີ 13 ເໜືອທີ່ເຊື່ອມຕໍ່ກັບບັນດາແຂວງພາກເໜືອ, ພາກໃຕ້ ແລະ ນະຄອນຫລວງວຽງຈັນ.

**ມາດຕາ 7 ຂອບເຂດເທດສະບານແຂວງ.**

ເຂດໃຈກາງເທດສະບານແຂວງວຽງຈັນ ຕັ້ງຢູ່ແຄມແມ່ນ້ຳງື່ມເຊິ່ງກວມເອົາ 8 ໝູ່ບ້ານຄື: ບ້ານໂພນໝີ ບ້ານໂນນສະຫວ່າງ, ບ້ານນາບົນ, ບ້ານນາເຄືອ, ບ້ານເວີນສານ, ບ້ານເມືອງເກົ່າ,ບ້ານທ່າໂພໄຊ ແລະບ້ານປາກກະຍຸງ.

ເທດສະບານແຂວງ ກວມເອົາສ່ວນໜຶ່ງຂອງ ເມືອງວຽງຄຳ ແລະ ເມືອງແກ້ວອຸດົມ ມີເນື້ອທີ່ທັງໝົດ 8.000 ຮຕ,ໃນນັ້ນ: ໃຈກາງເທດສະບານ ມີເນື້ອທີ່ 1.700 ເຮັກຕາ ແລະ ການອອກແບບລະອຽດ ມີເນື້ອທີ່ 750 ຮຕ, ນອກນີ້ ເປັນເຂດສະຫງວນ, ເຂດອານຸລັກ, ເຂດຂະຫຍາຍຕົວເມືອງ, ເຂດທີ່ຢູ່ອາໄສເດີມ ແລະ ເຂດອື່ນໆ.

**ມາດຕາ 8 ອົງປະກອບຂອງເທດສະບານແຂວງ.**

ເຂດຈັດສັນບໍລິເວນເທດສະບານແຂວງ ແມ່ນປະກອບດ້ວຍເຂດລຽບຕາມແຄມນ້ຳງື່ມ, ເສັ້ນທາງສາຍເອກ(ສາຍA), ທາງສາຍຫຼັກ (ສາຍB), ທາງສາຍເຊື່ອມ (ສາຍC) ແລະ ທາງສາຍແຈກ (ສາຍD), ທາງເອກະລັກ, ເຂດສຳນັກງານອົງການຂອງລັດ, ສວນສາທາລະນະ, ເຂດຂຽວ, ເຂດການສຶກສາ, ເຂດການບໍລິການ, ເຂດທີ່ຢູ່ອາໄສເຮືອນຕໍ່າ, ເຮືອນທີ່ມີຫ້ອງຊຸດ, ສະໜາມກິລາຄັບອົງຈອນ, ເຂດໂຮງໝໍ,ເຂດສາດສະໜາ ແລະ ສະຖານີລົດຂົນສົ່ງ.

## ໝວດທີ 3
## ການຈັດສັນ ແລະ ການພັດທະນາເທດສະບານ ແຂວງວຽງຈັນ

**ມາດຕາ 9 ການຈັດສັນ ແລະ ພັດທະນາພື້ນທີ່ ເທດສະບານ ແຂວງ.**

ພື້ນທີ່ຂອງໂຄງການພັດທະນາໃຈກາງເທດສະບານແຂວງ ແມ່ນນອນຢູ່ໃນໃຈກາງເມືອງວຽງຄຳ ຊຶ່ງປະກອບດ້ວຍເຂດນຳໃຊ້ທີ່ດິນຫຼາຍປະເພດເຊັ່ນ: ເຂດການປົກຄອງ, ເຂດທີ່ຢູ່ອາໄສ, ເຂດທຸລະກິດການຄ້າ, ເຂດບໍລິເວນທາງດ້ານການສຶກສາ, ສາທາລະນະສຸກ, ເຂດປົກຫຸ້ມທຳມະຊາດສີຂຽວ, ສວນສາທາລະນະແຄມແມ່ນ້ຳງື່ມ ແລະ ສະໜາມກິລາ, ເຊິ່ງກວມເອົາບ້ານໂພນໝີ, ບ້ານໂນນສະຫວ່າງ, ບ້ານນາບົນ, ບ້ານນາເຄືອ, ບ້ານເວີນສານ, ບ້ານເມືອງເກົ່າ, ບ້ານທ່າໂພໄຊ ແລະ ບ້ານປາກກະຍຸງ.

1. **ການຈັດສັນພື້ນທີ່ເຂດການປົກຄອງ.**

ປະກອບດ້ວຍເຂດການປົກຄອງຂອງແຂວງ ແລະ ເຂດການປົກຄອງຂອງເມືອງວຽງຄຳ ປະກອບມີ: ຫ້ອງວ່າການແຂວງ, ສະພາປະຊາຊົນແຂວງ, ບັນດາພະແນກການຕ່າງໆຂອງແຂວງ, ຫ້ອງວ່າການເມືອງວຽງຄຳ ແລະ ບັນດາຫ້ອງການປະຈຳເມືອງ, ຫ້ອງການຂອງລັດວິສາຫະກິດລວມເນື້ອທີ່ທັງໝົດ 69.56 ເຮັກຕາ ແລະ ຍັງໄດ້ກຳນົດພື້ນທີ່ສຳລັບເປັນເຂດຂະຫຍາຍ ເພື່ອການປຸກສ້າງສຳນັກງານອົງການຂອງແຂວງ.

2. **ການຈັດສັນພື້ນທີ່-ທີ່ຢູ່ອາໄສ.**

ເຂດທີ່ຢູ່ອາໄສໄດ້ຮັບການຈັດສັນເປັນຫຼາຍກຸ່ມເຊັ່ນ: ເຂດປະສົມ (C= ເຂດການຄ້າ; B=ເຂດທຸລະກິດ; R = ທີ່ຢູ່ອາໄສ), ເຂດເຮືອນຕໍ່າ, ເຂດເຮືອນທີ່ມີ ຫ້ອງຊຸດ (ອາພາດເມັ້ນ) ລວມມີ 11 ກຸ່ມ ທີ່ຢູ່ອາໄສ ລວມເນື້ອທີ່ 123 ເຮັກຕາ.

3. **ການຈັດສັນພື້ນທີ່ບໍລິການທາງດ້ານເສດຖະກິດ.**

ເຂດບໍລິການທາງດ້ານເສດຖະກິດປະກອບມີ: ສູນການຄ້າ, ຮ້ານອາຫານ, ຮ້ານບັນເທີງ, ສະຖານີລົດໂດຍສານ, ເຂດປະສົມ (C=ເຂດການຄ້າ; B=ເຂດທຸລະກິດ; R=ທີ່ຢູ່ອາໃສ) ມີເນື້ອທີ່ 49 ເຮັກຕາ.

4. **ການຈັດສັນເຂດຂຽວສາທາລະນະ, ເຂດຂຽວທຳມະຊາດ ແລະ ເຂດຂຽວກະສິກຳ-ປ່າໄມ້.**

ການພັດທະນາຕົວເມືອງແມ່ນມີນະໂຍບາຍພັດທະນາເຂດຂຽວເປັນມິດກັບສິ່ງແວດລ້ອມ ເຊິ່ງກຳນົດເຂດສວນສາທາລະນະ, ສວນສະໜຸກໃນຕົວເມືອງ ມີການປູກຕົ້ນໄມ້ເພື່ອເປັນສີຂຽວ ແລະ ຮັກສາໜອງນ້ຳໄວ້ເປັນທຳມະຊາດ, ເຂດຂຽວແຄມແມ່ນ້ຳງື່ມ ຮັກສາເປັນເຂດສະຫງວນແຄມນ້ຳ 50m. ພື້ນທີ່ດັ່ງກ່າວມີການຈັດສັນເຂດໂຮງແຮມ ແລະ ມີການປ້ອງກັນຕາຝັ່ງເຈື່ອນແຄມແມ່ນ້ຳ, ເຂດຂຽວທຳມະຊາດເຊິ່ງຮັກສາອະນຸລັກ ແລະ ເຂດກະສິກຳທີ່ຢູ່ອ້ອມຮອບຕົວເມືອງ.

5. **ການຈັດສັນພື້ນທີ່ສະໜາມກິລາ.**

ພື້ນທີ່ສະໜາມກິລາຂອງແຂວງ ໄດ້ຈັດສັນໄວ້ ເພື່ອການກໍ່ສ້າງສະໜາມກິລາຂອງແຂວງ ເຊິ່ງສາມາດຈັດການແຂ່ງຂັນກິລາຫຼາຍປະເພດ ລວມມີ: ເດີ່ນກິລາກາງແຈ້ງ ແລະ ເດີ່ນກິລາໃນຮົ່ມ, ຫໍພັກນັກກິລາ, ເດີ່ນຝຶກຊ້ອມ ແລະ ອອກກຳລັງກາຍ ເຊິ່ງກວມເອົາເນື້ອທີ່ 22 ເຮັກຕາ.

6. **ການຈັດສັນໂຄງລ່າງພື້ນຖານ.**

ໂຄງລ່າງພື້ນຖານຂອງຕົວເມືອງປະກອບມີ: ໂຄງສ້າງເສັ້ນທາງ ມີ 4 ປະເພດເສັ້ນທາງເຊັ່ນ: ເສັ້ນທາງສັນຍາລັກ, ເສັ້ນທາງສາຍເອກ (ສາຍA), ເສັ້ນທາງສາຍຫຼັກ ( ສາຍB), ເສັ້ນທາງສາຍເຊື່ອມ (ສາຍC ) ແລະ ເສັ້ນທາງສາຍແຈກ ( ສາຍD), ມີລະບົບໄຟຟ້າຕົວເມືອງ, ລະບົບຕາໜ່າງນ້ຳປະປາ, ລະບົບການສື່ສານໂທລະຄົມມະນາຄົມ, ການບຳບັດນ້ຳເສຍ, ການກຳຈັດຂີ້ເຫຍື້ອ ແລະ ອື່ນໆ.

## ໝວດທີ 4
## ການຄຸ້ມຄອງ ແລະ ການກວດກາ ການພັດທະນາເທດສະບານແຂວງ

**ມາດຕາ 10 ອົງການຄຸ້ມຄອງ.**

ອົງການຄຸ້ມຄອງການຈັດສັນ, ຄຸ້ມຄອງ ແລະ ພັດທະນາເທດສະບານແຂວງ ປະກອບດ້ວຍ: ຮອງເຈົ້າແຂວງ, ຫ້ອງວ່າການແຂວງ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກພະລັງງານ ແລະ ບໍ່ແຮ່, ພະແນກແຜນການ ແລະ ການລົງທຶນ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງ, ເມືອງ-ເທດສະບານ, ກອງເລຂາພັດທະນາເທດສະບານແຂວງ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ.

**ມາດຕາ 11 ສິດ ແລະ ໜ້າທີ່ ຂອງຄະນະຊີ້ນຳ ການຈັດສັນ, ຄຸ້ມຄອງ ແລະ ພັດທະນາເທດສະບານແຂວງ.**

1. ຄົ້ນຄວ້າ, ວາງເງື່ອນໄຂເພື່ອຄັດເລືອກເອົາບຸກຄົນ, ນິຕິບຸກຄົນ, ຫືອໜ່ວຍທຸລະກິດ, ບໍລິສັດ ທີ່ມີເງື່ອນໄຂມາລົງທຶນເພື່ອມາຈັດຕັ້ງປະຕິບັດໂຄງການຕ່າງໆ ໃຫ້ສຳເລັດຕາມແຜນຜັງທີ່ວາງໄວ້.
2. ຮຽກປະຊຸມພາຍໃນຄະນະ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ວາງແຜນການຈັດຕັ້ງປະຕິບັດບັນດາໂຄງການໃຫ້ສຳເລັດ ແລະ ມີປະສິດທິຜົນສູງ.
3. ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້, ຕ້ອງມີຄວາມຮັບຜິດຊອບຕໍ່ຜົນໄດ້ ແລະ ຜົນເສຍຕໍ່ເຈົ້າແຂວງ ແລະ ຂັ້ນເທິງ.
4. ຊີ້ນຳ-ນຳພາ ແລະ ສຶກສາອົບຮົມການເມືອງ-ແນວຄິດ ຕໍ່ພໍ່ແມ່ປະຊາຊົນ ໃນຂອບເຂດເທດສະບານແຂວງກ່ຽວກັບການແກ້ໄຂບັນຫາສິ່ງກີດຂວາງຕ່າງໆ ຂອງໂຄງການພັດທະນາ.

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງບັນດາພະແນກການທີ່ກ່ຽວຂ້ອງ.**

1. ຮັບຜິດຊອບໂດຍກົງທາງດ້ານວິຊາການ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຕາມລະບຽບ-ກົດໝາຍ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງກັບການຈັດສັນ, ຄຸ້ມຄອງ ແລະ ພັດທະນາເທດສະບານແຂວງ.

2. ຕິດຕາມ-ກວດກາການຈັດຕັ້ງປະຕິບັດບັນດາໂຄງການກໍ່ສ້າງ, ກິດຈະການຕ່າງໆທີ່ໄດ້ຮັບອະນຸມັດໃຫ້ຖືກຕ້ອງ ແລະ ສອດຄ່ອງກັບຜັງເມືອງທີ່ກໍານົດໄວ້.
3. ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ໃນການດໍາເນີນທຸລະກິດຕ່າງໆ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ ພ້ອມທັງແນະນໍາວິທີແກ້ໄຂບັນຫາ ແລະ ທັງນໍາໃຊ້ມາດຕະການຢ່າງເດັດຂາດ ຕໍ່ຜູ້ລະເມີດ ຕາມລະບຽບກົດໝາຍ.
4. ຄົ້ນຄວ້ານໍາສະເໜີໂຄງການພັດທະນາຕໍ່ ອົງການປົກຄອງແຂວງ ເພື່ອຂໍອະນຸມັດ ຫຼື ສະເໜີປິດກິດຈະການທີ່ເຫັນວ່າບໍ່ສອດຄ່ອງກັບລະບຽບການ ແລະ ຜັງເມືອງທີ່ກໍານົດໄວ້.

**ມາດຕາ 13 ສິດ ແລະ ໜ້າທີ່ ຂອງອົງການປົກຄອງເມືອງ-ເທດສະບານ.**

1. ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມກົດໝາຍ ແລະ ລະບຽບການອື່ນໆ ໃນຂອບເຂດພື້ນທີ່ ທີ່ຕົນເອງຮັບຜິດຊອບໃນເທດສະບານແຂວງ.
2. ຕິດຕາມ-ກວດກາ ແລະ ເຕືອນຜູ້ທີ່ລະເມີດລະບຽບການຄຸ້ມຄອງຜັງເມືອງໃນຂອບເຂດເທດສະບານແຂວງ ພ້ອມກັນນັ້ນ ກໍລາຍງານຕໍ່ອົງການປົກຄອງແຂວງເພື່ອແກ້ໄຂຢ່າງທັນການ.
3. ໂຄສະນາ, ປຸກລະດົມ-ຂົນຂວາຍ ທຸກພາກສ່ວນພາຍໃນເມືອງໃຫ້ເຂົ້າຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ ແລະ ມີສ່ວນຮ່ວມໃນການພັດທະນາເທດສະບານຂອງແຂວງ.
4. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍຂອງອົງການປົກຄອງແຂວງ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງກອງເລຂາເທດສະບານແຂວງ.**

1. ພົວພັນປະສານສົມທົບກັບຄະນະຊີ້ນໍາ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຕາມຄວາມເໝາະສົມ.
2. ສະເໜີຕໍ່ ຫົວໜ້າຄະນະຮັບຜິດຊອບຊີ້ນໍາໂຄງການພັດທະນາເທດສະບານແຂວງ ແລະ ເຈົ້າແຂວງ ໃຫ້ບັນດາຂະແໜງວິຊາການ ແລະ ພາກສ່ວນທີ່ກ່ຽວຂ້ອງພາຍໃນແຂວງ, ເມືອງສະໜອງຂໍ້ມູນ ແລະ ລາຍງານສະພາບການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຕ່າງໆໃນເທດສະບານແຂວງ ໃຫ້ກອງເລຂາຕາມລະບຽບການ.
3. ສະເໜີຕໍ່ຫົວໜ້າຫ້ອງວ່າການແຂວງ, ຄະນະຊີ້ນໍາໂຄງການພັດທະນາເທດສະບານແຂວງ ແລະ ເຈົ້າແຂວງ ບັນຈຸຊັບຊ້ອນພະນັກງານ, ສະໜອງງົບປະມານ, ປະກອບພາຫະນະ ແລະ ອຸປະກອນເຄື່ອງໃຊ້ຕ່າງໆ ທີ່ຈໍາເປັນ ເຂົ້າໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງກອງເລຂາຕາມຄວາມເໝາະສົມ.
4. ເປັນໃຈກາງປະສານສົມທົບກັບບັນດາພະແນກການ, ອົງການ, ກົມກອງ, ເມືອງ, ບ້ານ, ບຸກຄົນ ແລະ ນິຕິບຸກຄົນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ວິໄຈບັນດາຂໍ້ມູນດ້ານຕ່າງໆ ທີ່ດໍາເນີນການເຄື່ອນໄຫວກິດຈະການ, ວຽກງານຢູ່ໃນເຂດເທດສະບານແຂວງ ເພື່ອສະເໜີຕໍ່ຄະນະຮັບຜິດຊອບຊີ້ນໍາໂຄງການພັດທະນາເທດສະບານແຂວງ ແລະ ເຈົ້າແຂວງມີທິດຊີ້ນໍາ.
5. ຊ່ວຍຄະນະຮັບຜິດຊອບຊີ້ນໍາ ໃນການລົງຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງປະຕິບັດວຽກງານດ້ານຕ່າງໆຂອງບັນດາພາກສ່ວນກ່ຽວຂ້ອງ ທີ່ໄດ້ເຄື່ອນໄຫວຈັດຕັ້ງປະຕິບັດ ຢູ່ໃນຂອບເຂດແຜນຜັງເທດສະບານແຂວງ. ພ້ອມກັນນັ້ນ ກໍສະຫຼຸບ-ສັງລວມ ແລະ ລາຍງານສະພາບການຈັດຕັ້ງປະຕິບັດດັ່ງກ່າວໃຫ້ຄະນະຮັບຜິດຊອບຊີ້ນໍາໂຄງການພັດ ທະນາເທດສະບານແຂວງ, ເຈົ້າແຂວງ ມີທິດຊີ້ນໍາ ແລະ ໃຫ້ທັດສະນະ ຕໍ່ບັນຫາຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍ.
6. ກະກຽມເນື້ອໃນ ແລະວາລະກອງປະຊຸມ, ຄໍາຖາມເຈາະຈີ້ມ ໃຫ້ຄະນະຮັບຜິດຊອບຊີ້ນໍາໂຄງການພັດທະນາເທດສະບານແຂວງ, ເຈົ້າແຂວງ ຕໍ່ບັນຫາຕ່າງໆທີ່ພະແນກການ, ອົງການ, ກົມກອງ, ເມືອງ, ບ້ານ, ບຸກຄົນ ແລະ ນິຕິບຸກຄົນທີ່ກ່ຽວຂ້ອງສົ່ງເຂົ້າມາ.
7. ບັນທຶກ ແລະ ປົກປັກຮັກສາບັນດາຂໍ້ມູນ, ເອກະສານຕ່າງໆທີ່ກອງເລຂາໄດ້ຄົ້ນຄວ້າ, ວິໄຈໃຫ້ມີຄວາມປອດໄພ, ຮັບປະກັນບໍ່ໃຫ້ຕົກເຮ່ຍເສຍຫາຍ ແລະ ບໍ່ໃຫ້ເສຍຄວາມລັບ.

8. ສະຫຼຸບ-ສັງລວມ ສະພາບການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດວຽກງານ ໃນແຕ່ລະດ້ານ ໃຫ້ຄະນະຊີ້ນໍາໂຄງການພັດທະນາເທດສະບານແຂວງ ແລະ ເຈົ້າແຂວງຊາບເປັນປົກກະຕິ.
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຄະນະຮັບຜິດຊອບຊີ້ນໍາໂຄງການພັດທະນາເທດສະບານ ແຂວງ ແລະ ເຈົ້າແຂວງ.

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ.**

ເປັນເຈົ້າການການສຶກສາອົບຮົມ ແລະ ປຸກລະດົມປະຊາຊົນໃນຂອບເຂດບ້ານຂອງຕົນ ໃຫ້ເຂົ້າຮ່ວມໃນການຄຸ້ມຄອງ, ພັດທະນາເທດສະບານແຂວງ ໃຫ້ມີປະສິດທິຜົນ. ພ້ອມກັນນັ້ນ ກໍຕິດຕາມ, ກວດກາ ແລະ ກ່າວເຕືອນຜູ້ລະເມີດຂໍ້ຕົກລົງສະບັບນີ້ ແລ້ວລາຍງານຕໍ່ຄະນະຮັບຜິດຊອບການຈັດສັນ, ຄຸ້ມຄອງ ແລະ ພັດທະນາເທດສະບານແຂວງ ເພື່ອດໍາເນີນການແກ້ໄຂໃຫ້ທັນເວລາ.

**ມາດຕາ 16 ອົງການກວດກາ.**

ອົງການກວດກາປະກອບມີ 2 ພາກສ່ວນ ຄື:

- ອົງການກວດກາພາຍໃນ ແມ່ນອົງການດຽວກັບຄະນະຮັບຜິດຊອບການຈັດສັນ, ການຄຸ້ມຄອງ ແລະ ພັດທະນາເທດສະບານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.
- ອົງການກວດກາພາຍນອກປະກອບມີ: ສະພາປະຊາຊົນຂັ້ນແຂວງ,ພະແນກກວດກາລັດແຂວງ, ອົງການກວດສອບປະຈໍາພາກກາງ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຂອງແຂວງວຽງຈັນ.

**ມາດຕາ 17 ເນື້ອໃນການກວດກາ.**

1. ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການໃນການຈັດສັນ, ການຄຸ້ມຄອງ ແລະພັດທະນາເທດສະບານ ແຂວງວຽງຈັນ ຢ່າງເຂັ້ມງວດ.
2. ກວດການຈັດຕັ້ງປະຕິບັດໜ້າທີ່ ຂອງອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ, ບຸກຄົນ, ນິຕິບຸກຄົນ ທີ່ກ່ຽວຂ້ອງກັບຂໍ້ຕົກລົງສະບັບນີ້.
3. ກວດກາການກໍ່ສ້າງ ແລະ ການຈັດຕັ້ງປະຕິບັດແຜນການ ການຈັດສັນ, ການຄຸ້ມຄອງ ແລະ ພັດທະນາເທດສະບານ.
4. ກວດກາການນໍາໃຊ້ງົບປະມານ ໃນການຈັດສັນ, ການຄຸ້ມຄອງ ແລະ ພັດທະນາເທດສະບານ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 18 ຂໍ້ຫ້າມ.**

1. ຫ້າມທຸກການກະທໍາທີ່ເປັນການທໍາລາຍ ແລະ ແຕະຕ້ອງເຖິງໂຄງສ້າງຕາຝັ່ງແມ່ນໍ້າງື່ມ.
2. ຫ້າມທຸກກິດຈະການກໍ່ສ້າງຢູ່ໃນເຂດແຄມແມ່ນໍ້າງື່ມ, ບໍລິເວນເທດສະບານແຂວງ ທີ່ສ້າງຜົນກະທົບ ຕໍ່ໂຄງສ້າງລະບົບປ້ອງກັນແຄມແມ່ນໍ້າງື່ມ, ລະບົບນິເວດວິທະຍາ ແລະສະພາບແວດລ້ອມ.
4. ຫ້າມການລ້ຽງປາກະຊັງ ຕາມແຄມແມ່ນໍ້າງື່ມ, ການກໍ່ສ້າງຮ້ານອາຫານ ແລະ ຮ້ານຂາຍເຄື່ອງຕາມແຄມນໍ້າງື່ມ, ແຕ່ບາງກິດຈະການທີ່ມີຄວາມຈໍາເປັນຕ້ອງໄດ້ຮັບການພິຈາລະນາ ແລະ ອະນຸຍາດຈາກຄະນະຊີ້ນໍາໂຄງການພັດທະນາເທດສະບານແຂວງ.
5. ຫ້າມການກໍ່ສ້າງອາຄານ, ຮ້ານຄ້າ, ປ້າຍໂຄສະນາ ແລະ ສິ່ງປຸກສ້າງອື່ນໆ ເປັນລັກສະນະຖາວອນມີຄວາມສູງ ຢູ່ລຽບຕາມແຄມແມ່ນໍ້າງື່ມບໍລິເວນເທດສະບານແຂວງ ທີ່ຈະປິດບັງທິວທັດທໍາມະຊາດແຄມແມ່ນໍ້າງື່ມ,ໃນກໍລະ ນີ ມີຄວາມຈໍາເປັນຕ້ອງໄດ້ຜ່ານການຄົ້ນຄ້ວາ ແລະ ຮັບອະນຸຍາດ ໂດຍບໍ່ໃຫ້ເກີນລວງສູງທີ່ທາງການອະນຸມັດໃຫ້ ( ຕາມການອອກແບບແຜນຜັງຂອງຍີ່ປຸ່ນກໍານົດໄວ້ ).
6. ຫ້າມການຖົມດິນ ແລະ ຖິ້ມຂີ້ເຫຍື້ອ ໃສ່ບໍລິເວນແຄມແມ່ນໍ້າງື່ມ.

7. ຫ້າມທຸກກິດຈະການຂຸດຄົ້ນຫີນ-ຊາຍ, ດິນແດງ ແລະດິນດຳ ຫຼື ການສ້າງບ່ອນເກັບມ້ຽນຫີນ-ຊາຍ,ດິນດຳ ດິນແດງໃນບໍລິເວນແຄມແມ່ງື່ມ ແລະ ເຂດເທດສະບານແຂວງ.

8. ຫ້າມຕັ້ງຮ້ານຂາຍເຄື່ອງກໍ່ສ້າງ, ສາງເກັບມ້ຽນສິນຄ້າທຸກປະເພດ, ປ້າຍໂຄສະນາ ແລະ ອື່ນໆ ທີ່ເຫັນວ່າ ມີຄວາມຊຸ່ງຊ່ຽງ ແລະບໍ່ສວຍງາມ ເຊິ່ງເປັນອັນຕະລາຍຕໍ່ປະຊາຊົນ, ນັກທ່ອງທ່ຽວໃນບໍລິເວນແຄມແມ່ນ້ຳງື່ມ.

9. ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງຈັບຈອງ, ບຸກເບີກພື້ນທີ່, ດຳເນີນກິດຈະການ ແລະພັດທະນາທີ່ດິນ ໂດຍບໍ່ໄດ້ຮັບອະນຸຍາດ.

10. ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງດຳເນີນກິດຈະການ ແລະ ພັດທະນາທີ່ດິນເກີນຂອບເຂດສິດທີ່ດິນເອງໄດ້ຮັບອານຸຍາດ.

## ໝວດທີ 6

## ນະໂຍບາຍຕໍ່ຜູ້ມີຜົນງານແລະມາດຕະການຕ່າງໆຕໍ່ຜູ້ທີ່ລະເມີດ.

**ມາດຕາ 19 ນະໂຍບາຍຕໍ່ຜູ້ມີຜົນງານ.**

- ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ທີ່ມີຜົນງານ ໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ເກີດມີຜົນປະໂຫຍດອັນສູງສຸດ ຕໍ່ການພັດທະນາ ແລະສ້າງສາເທດສະບານແຂວງ ຈະໄດ້ຮັບການຍ້ອງຍໍ ແລະປະຕິບັດນະໂຍບາຍຕາມຄວາມເໝາະສົມ.
- ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງພາກລັດ ແລະເອກະຊົນທີ່ໄດ້ຮັບການແບ່ງປັນ-ຈັດສັນທີ່ດິນໃນເທດສະບານແຂວງ ຕ້ອງໄດ້ປະຕິບັດ ຕາມຄຳສັ່ງ, ດຳລັດ, ກົດໝາຍ ແລະ ນະໂຍບາຍຕ່າງໆ ທີ່ວາງອອກ ໃນແຕ່ລະໄລຍະ.

**ມາດຕາ 20 ມາດຕະການຕໍ່ຜູ້ລະເມີດ.**

- ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ໄດ້ຮັບການຈັດສັນ, ແບ່ງປັນທີ່ດິນ ຕາມແຜນຜັງກຳນົດໄວ້ຕ້ອງດຳເນີນກິດຈະການ ແລະ ພັດທະນາທີ່ດິນ ພາຍໃນກຳນົດເວລາອັນເໝາະສົມ.
- ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງໃດ ທີ່ລະເມີດຂໍ້ຕົກລົງ ສະບັບນີ້ ຕ້ອງຖືກສຶກສາອົບຮົມ, ກ່າວເຕືອນ ປັບໃໝ ຫຼື ຖືກດຳເນີນຄະດີຕາມລະບຽບກົດໝາຍ.

## ໝວດທີ 7

## ບົດບັນຍັດສຸດທ້າຍ

**ມາດຕາ 21 ການຈັດຕັ້ງປະຕິບັດ.**

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດທີ່ກ່ຽວຂ້ອງກັບການຄຸ້ມຄອງ, ພັດທະນາ ແລະ ການນຳໃຊ້ທີ່ດິນຂອບເຂດເທດສະບານແຂວງ ຕ້ອງປະຕິບັດຕາມຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍອື່ນໆ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**ມາດຕາ 22** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

**ເຈົ້າແຂວງ**

ຄຳພັນ ສິດທິດຳພາ